

# ໂຢຊວຍທີ່ແທ້ຈິງ

ບົດຮຽນທີ 10 ສຳລັບສະບາໂຕທີ 6 ທັນວາ 2025







“ເຫດການທັງໝົດເຫລົ່ານີ້ ໄດ້ເກີດຂຶ້ນແກ່ບັນພະບຸຣຸດຂອງພວກເຮົາ
ກໍເພື່ອເປັນຕົວຢ່າງໃຫ້ແກ່ຜູ້ອື່ນ ແລະ ໄດ້ບັນທຶກເຫດການທັງໝົດນີ້
ໄວ້ເພື່ອເຕືອນສະຕິພວກເຮົາ ຊຶ່ງຢູ່ໃນຍຸກສຸດທ້າຍທີ່ກຳລັງຈະມາ
ເຖິງ” (1 ກຣທ 10:11)

ພວກເຮົາສາມາດເຫັນຊີວິດຂອງໂຢຊວຍ, ຢູ່ໃນພຣະຄຳພີບາງສ່ວນ ແລະ ຢູ່ໃນພຣະທຳໂຊຢວຍ, ເຊິ່ງສາມາດພັນລະນາໄດ້ 2 ແບບທີ່ແຕກຕ່າງກັນຄື: ເປັນປະຫວັດສາດ ແລະ ເປັນສັນຍາລັກ

ເພື່ອໃຫ້ເຂົ້າໃຈຄວາມໝາຍໃນເຊີງສັນຍາລັກໄດ້ຢ່າງຖືກຕ້ອງ ພວກເຮົາຈະຕ້ອງຮູ້ກົດເກນທີ່ໃຊ້ຄວບຄຸມສັນຍາລັກໃນພຣະຄຳພີກ່ອນ, ແບບຢ່າງ ແລະ ຄວາມສຳເລັດຕາມພຣະຄຳພີ

ເມື່ອພວກເຮົາເຂົ້າໃຈສິ່ງນີ້ແລ້ວ, ພວກເຮົາກໍ່ຈະໄດ້ສືບເຊາະຊອກຫາສັນຍາລັກຂອງໂຢຊວຍຜ່ານສ່ວນອື່ນໆຂອງພຣະຄຳພີ ເພື່ອຄົ້ນຫາຂໍ້ຄວາມທີ່ພຣະເຈົ້າໄດ້ປະທານໃຫ້ແກ່ພວກເຮົາຜ່ານທາງພຣະວັດຈະນະ ທີ່ມີໂຢຊວຍເປັນຄືກັບ "ສັນຍາລັກ".





**ສັນຍາລັກໃນພຣະຄຳພີ:**

- ການສຶກສາແບບຢ່າງໃນພຣະຄຳພີແມ່ນຫຍັງ?
- ລຳດັບຂອງແຕ່ລະສັນຍາລັກ

**ສັນຍາລັກຂອງໂຢຊວຍ:**

- ໂຢຊວຍໃນຖານະເປັນສັນຍາລັກ
- ໂຢຊວຍໃນແບບຢ່າງທີ່ແທ້ຈິງ
- ໂຢຊວຍເປັນແບບຢ່າງໃຫ້ແກ່ຄຣິດຕະຈັກ

# ສັນຍາລັກ
# ໃນພຣະຄຳພີ

# ການສຶກສາສັນຍາລັກໃນພຣະຄຳພີແມ່ນຫຍັງ?

"ເຫດການທັງໝົດເຫລົ່ານີ້ ໄດ້ເກີດຂຶ້ນແກ່ບັນພະບຸຣຸດຂອງພວກເຮົາ ກໍເພື່ອເປັນຕົວຢ່າງໃຫ້ແກ່ຜູ້ອື່ນ ແລະ ໄດ້ບັນທຶກເຫດການທັງໝົດນີ້ໄວ້ເພື່ອເຕືອນສະຕິພວກເຮົາ ຊຶ່ງຢູ່ໃນຍຸກສຸດທ້າຍທີ່ກຳລັງຈະມາເຖິງ" (1ກຣທ 10:11)



ໂປໂລ– ແລະຜູ້ຂຽນພຣະຄຳພີຄົນອື່ນໆ– ນຳໃຊ້ຄຳວ່າ "ຕົ້ນແບບ" ເພື່ອອ້າງເຖິງບຸກຄົນ ຫລື ເຫດການທາງປະຫວັດສາດທີ່ເປັນຕົວແທນຂອງບາງສິ່ງບາງຢ່າງໃນຍຸກສະໄໝຂອງພວກເຂົາເອງ ຫລື ໃນອະນາຄົດ (ເຊິ່ງເອີ້ນວ່າ "ແບບສະບັບ").



ຕົວຢ່າງ, ໂຣມ 5:14 ກ່າວເຖິງອາດາມວ່າເປັນແບບສະບັບ "ຂອງຜູ້ທີ່ຈະມາ ນັ້ນກໍ່ຄືພຣະເຢຊູ—ຜູ້ເປັນແບບຢ່າງ

ໃນຫລາຍໆໂອກາດ, ພວກເຮົາພົບໃນພັນທະສັນຍາເດີມ ເຊິ່ງບົ່ງບອກວ່າບຸກຄົນ ຫລື ເຫດການທີ່ສະເພາະເຈາະຈົງເປັນສັນຍາລັກຂອງບາງສິ່ງບາງຢ່າງທີ່ຈະເກີດຂຶ້ນ. ເພື່ອໃຫ້ເຂົ້າໃຈ ໃຫ້ປຽບທຽບຕົວຢ່າງເຫລົ່ານີ້



**ສັນຍາລັກ**
- ເດວິດ (ພສສ 22:1)



**ສັນຍາລັກ**
- ການເສຍສະຫລະ (ລບລວ. 1:3-5)



**ການເຜີຍແຜ່ສັນຍາລັກ**
- ເດວິດໃໝ່ (ຢລມຢ. 23:5)



**ການເຜີຍແຜ່ສັນຍາລັກ**
- ຜູ້ຮັບໃຊ້ທີ່ທໍລະມານ (ອຢຊ. 53:5-7)



**ຄວາມສຳເລັດຂອງສັນຍາລັກ**
- ພຣະເຢຊູ (ມທ. 27:46)



**ຄວາມສຳເລັດຂອງສັນຍາລັກ**
- ຄວາມຕາຍຂອງພຣະເຢຊູ(ຢຮ. 19:16-18)

ສັນຍາລັກໃນພຣະຄຳພີເດີມ ແຕ່ລະອັນສາມາດມີຄວາມໝາຍ 3 ປະການທີ່ແຕກຕ່າງກັນໃນພຣະຄຳພີໃໝ່. ຄຳຖາມ 3 ຂໍ້ເຫລົ່ານີ້ສາມາດຊ່ວຍໃຫ້ພວກເຮົາເຂົ້າໃຈວ່າຄວາມໝາຍເຫລົ່ານີ້ແມ່ນຫຍັງ?

1. ສັນຍາລັກນັ້ນສະແດງໃຫ້ເຮົາເຫັນຫຍັງກ່ຽວກັບຊີວິດຂອງພຣະເຢຊູ?
2. ສັນຍາລັກທີ່ສະແດງນັ້ນ ໃຫ້ພວກເຮົາເຫັນຫຍັງກ່ຽວກັບປະສົບການຂອງຄຣິດຕະຈັກ?
3. ສັນຍາລັກທີ່ສະແດງນັ້ນ ເຮັດໃຫ້ພວກເຮົາເຫັນຫຍັງກ່ຽວກັບຍຸກສຸດທ້າຍ?

ໃຫ້ພິຈາລະນາເບິ່ງສັນຍາລັກ 3 ຢ່າງໃນພຣະຄຳພີເດີມ:

1. ອິດສະຣາເອນເປັນສັນຍາລັກແນວໃດ?
2. ການອົບພະຍົບເປັນສັນຍາລັກແນວໃດ?
3. ຫໍເຕັນສັກສິດຂອງພຣະເຈົ້າ ເປັນສັນຍາລັກແນວໃດ?

# ລຳດັບຂອງແຕ່ລະສັນຍາລັກ

"ແລະ ໄດ້ອາໄສຢູ່ທີ່ນັ້ນຈົນເຮໂຣດຕາຍ  ເຫດການທີ່ໄດ້ເກີດຂຶ້ນນີ້ກໍເພື່ອໃຫ້ສຳເລັດຕາມທີ່ອົງພຣະຜູ້ເປັນເຈົ້າໄດ້ກ່າວໄວ້ທາງຜູ້ທຳນວາຍວ່າ ເຮົາໄດ້ເອີ້ນເອົາລູກຂອງເຮົາໃຫ້ອອກມາຈາກປະເທດເອຢິບ' " (ມທ 2:15)

ສັນຍາລັກໃນພັນທະສັນຍາເດີມ ຊີ້ໃຫ້ເຫັນເຖິງປະເພດທີ່ແຕກຕ່າງກັນເຖິງ 3 ປະເພດໃນພັນທະສັນຍາໃໝ່ ໄດ້ແກ່; ພຣະຄຣິສ, ຄຣິດຕະຈັກ ແລະ ຊ່ວງເວລາໃນຍຸກສຸດທ້າຍ





TYPES AND ANTITYPES

| ຕົ້ນແບບ | ສັນຍາລັກ | | |
|---|---|---|---|
| ອິດສະຣາເອນ | ພຣະຄຣິສ | ພຣະອົງຖືກນຳໄປທີ່ປະເທດເອຢິບ | ມທ 2:13-15 |
| | ຄຣິດຕະຈັກ | ອິດສະຣາເອນໃໝ່ | ຄາລາເຕຍ 6:16 |
| | ຍຸກສຸດທ້າຍ | ຜູ້ຄົນ 144,000 | ພະນິມິດ 7:4 |
| ອົບພະຍົບ | ພຣະເຢຊູ | 40 ວັນໃນຖິ່ນແຫ້ງແລ້ງກັນດານ | ມທ 3:16-4:2 |
| | ຄຣິດຕະຈັກ | ຮັບບັບຕິສະມາແລະຮັບການຄ້ຳຈູນໂດຍພຣະຄຣິສ | 1 ກຣທ 10:1-6 |
| | ຍຸກສຸດທ້າຍ | ອົບພະຍົບອອກຈາກຄຣິດຕະຈັກຫຼົງເຫັດ | ພນມ 18:4 |
| ຫໍເຕັນສັກສິດ | ພຣະຄຣິສ | ພຣະອົງເປັນເໝືອນພຣະວິຫານທ່າມກາງພວກເຮົາ | ຢຮ 1:14; 2:21-22 |
| | ຄຣິດຕະຈັກ | ພວກເຮົາແມ່ນພຣະວິຫານຂອງພຣະເຈົ້າ | 1 ກຣທ 3:16-17 |
| | ຍຸກສຸດທ້າຍ | ເຢຣູຊາເລັມໃໝ່ແມ່ນພຣະວິຫານຂອງພວກເຮົາ | ພນມ 21:2-3 |

# ສັນຍາລັກຂອງ
# ໂຢຊວຍ

# ໂຢຊວຍປຽບເໝືອນແບບຢ່າງຂອງໂມເຊ

“ແລ້ວໂມເຊກໍຕອບວ່າ ຂ້ອຍຈຳເປັນຕ້ອງເຮັດເຊັ່ນນີ້ ຍ້ອນປະຊາຊົນມາຫາເພື່ອຮຽນຮູ້ສິ່ງທີ່ພຣະເຈົ້າຕ້ອງການໃຫ້ພວກເຂົາເຮັດ.” (ອພຍ 18:15)

ໂມເຊກ່າວວ່າ ພຣະເຈົ້າຈະສົ່ງທູດຜູ້ສົ່ງຂ່າວພິເສດໃຫ້, ຜູ້ສົ່ງຂ່າວພິເສດຜູ້ນີ້ແມ່ນໃຜ?

ອ່ານ ພບຍ 18:15-19, 34:10-12, ກຈກ 3:22-26, 7:37

ໂຢຊວຍໄດ້ຮັບຄຳຂ່າວສານຈາກພຣະເຈົ້າໂດຍກົງຄືກັນກັບໂມເຊ; ລາວໄດ້ສະເຫລີມສະຫລອງເທດສະການປັດສະຄາ; ຂ້າມແມ່ນ້ຳ; ໄດ້ເຫັນທູດສະຫວັນຂອງພຣະເຈົ້າ; ມືທີ່ຍື່ນອອກໄປຂອງລາວນັ້ນໄດ້ຮັບໄຊຊະນະ; ແລະ ຍັງຂໍໃຫ້ປະຊາຊົນສືບຕໍ່ມີຄວາມຊື່ສັດຕໍ່ພຣະເຈົ້າຕໍ່ໄປ ເຖິງວ່າຈະບໍ່ມີລາວຢູ່ກໍ່ຕາມ











ໃນຂະນະທີ່ມານາໄດ້ເລີ່ມຕົກນັ້ນ, ພວກເຂົາໄດ້ຢູ່ພາຍໃຕ້ການປົກຄອງຂອງໂມເຊ.ຫລາຍໄປກວ່ານັ້ນ, ໂຢຊວຍຍັງໄດ້ປະຕິບັດຕາມຄຳສັ່ງກ່ຽວກັບການແບ່ງດິນແດນ ແລະ ເມືອງຕ່າງໆສຳລັບລີ້ໄພທີ່ໂມເຊໄດ້ສັ່ງໄວ້





ດັ່ງທີ່ພວກເຮົາເຫັນ: ໂຢຊວຍປຽບເໝືອນກັບໂມເຊ (ຄົນໃໝ່) ເພາະສະນັ້ນ, ທັງໂມເຊ ແລະ ໂຢຊວຍຈຶ່ງກາຍເປັນບຸກຄົນທີ່ເປັນແບບຢ່າງທີ່ເຮັດໃຫ້ພວກເຮົາເຂົ້າໃຈກ່ຽວກັບ “ຜູ້ເຜີຍພຣະວັດຈະນະ” ຢ່າງແທ້ຈິງ ນັ້ນກໍ່ຄື: ພຣະເຢຊູ (ກຈກ 3:22-26).

# ໂຢຊວຍຄືນໃໝ່

"ເມື່ອເຖິງເວລາທີ່ຈະຊ່ວຍເຈົ້າໃຫ້ພົ້ນ ເຮົາຈະເຫັນໃຈເຈົ້າ ແລະ ຈະຕອບຄຳຮ້ອງຂໍ ຈະເຝົ້າເບິ່ງແຍງຮັກສາ ແລະ ປົກປ້ອງເຈົ້າໄວ້ໂດຍທາງເຈົ້າ ເຮົາຈະຕັ້ງພັນທະສັນຍາກັບຊົນຊາດທັງຫລາຍທີ່ຢູ່ໃນໂລກນີ້. ເຮົາຈະນຳເຈົ້າໃຫ້ຕັ້ງຖິ່ນຖານເທື່ອໃໝ່ ໃນດິນແດນທີ່ເວລານີ້ຮົກຮ້າງຫວ່າງຄືນ" (ອຊຢ 49:8 )

ຈຸດປະສົງຂອງສົງຄາມທີ່ໂຢຊວຍເປັນຜູ້ນຳ ກໍ່ຄື: ການສະຖາປະນາ (ຕັ້ງຖິ່ນຖານ) ຊາວອິດສະຣາເອນໃນດິນແດນແຫ່ງພັນທະສັນຍາຢ່າງສັນຕິສຸກ ແລະ ຈະມີລະບົບການປົກຄອງໃໝ່, ລະບົບການປົກຄອງຈະຖວາຍກຽດແກ່ກົດບັນຍັດຂອງພຣະອົງ" (ໃນພຣະຄຳພີ ອຊຢ. 49:8), ສະແດງໃຫ້ເຫັນວ່າພຣະຜູ້ຊ່ວຍໃຫ້ລອດຈະເປັນໂຢຊວຍຄືນໃໝ່ ນັ້ນກໍ່ຄື "ພຣະເຢຊູ"

ຊີວິດ ແລະ ພາລະກິດຂອງໂຢຊວຍ (ໃນຖານະເປັນແບບຢ່າງ) ໄດ້ສະທ້ອນໃຫ້ເຫັນເຖິງ (ພາລະກິດຂອງພຣະເຢຊູ) ໃນແງ່ມູມໃດ? ແນ່ນອນວ່າ ພຣະເຢຊູໄດ້ເຮັດຫລາຍໆສິ່ງທີ່ໂຢຊວຍໄດ້ເຮັດ ຫລື ເຮັດບໍ່ໄດ້.

- ຫລັງຈາກພຣະອົງຮັບບັບຕິສະມາແລ້ວ ພຣະອົງກໍ່ອອກໄປຕໍ່ສູ້ຮົບກັບມານ
- ພຣະອົງເລີ່ມຕົ້ນພາລະກິດຂອງພຣະອົງ ຫລັງຈາກເຂົ້າໄປຢູ່ຖິ່ນແຫ້ງແລ້ງກັນດານເປັນເວລາ 40 ມື້
- ພຣະອົງໄດ້ເອົາຊະນະສັດຕູ ເຫັນໄດ້ຈາກໄມ້ກາງແຂນ
- ພຣະອົງປະທານໄຊຊະນະໃນການຕໍ່ສູ້ທາງຈິດວິນຍານໃຫ້ແກ່ພວກເຮົາ
- ພຣະອົງມອບການພັກຜ່ອນທີ່ແທ້ຈິງໃຫ້ແກ່ພວກເຮົາ
- ພຣະອົງມອບມໍລະດົກອັນບໍ່ເຊື່ອມສະຫລາຍໃຫ້ແກ່ພວກເຮົາ



# ໂຢຊວຍ ຄືແບບຢ່າງຂອງຄຣິດຕະຈັກ

"ດ້ວຍວ່າພວກເຮົາບໍ່ໄດ້ຕໍ່ສູ້ກັບເລືອດ ແລະ ເນື້ອໜັງ ແຕ່ຕໍ່ສູ້ກັບເຫລົ່າວິນຍານ ທີ່ມີອຳນາດຊົ່ວຮ້າຍ ໃນອາກາດສະຖານ ຄືຜູ້ຄອບຄອງ, ບັນດາຜູ້ມີອຳນາດ ແລະ ບັນດາເຫລົ່າວິນຍານຜີຊົ່ວຮ້າຍທັງຫລາຍ ທີ່ຄອບຄອງຢູ່ໃນຍຸກມືດນີ້ (ອຟຊ 6:12)

## ໂຢຊວຍ ແລະ ຄຣິດຕະຈັກ

ມື້ນີ້ພວກເຮົາມີສົງຄາມທີ່ຕ້ອງຕໍ່ສູ້, ເຊິ່ງນຳໂດຍ "ໂຢຊວຍ", ຜູ້ທີ່ຕຽມອາວຸດຍຸດໂທປະກອນທີ່ຈຳເປັນໃຫ້ກັບພວກເຮົາ (ອຟຊ. 6:10-12).

ຫລາຍໄປກວ່ານັ້ນ, ພຣະອົງຍັງຊົງມອບມໍລະດົກໃຫ້ແກ່ພວກເຮົາ ແລະ ຊົງເຕີມເຕັມພວກເຮົາດ້ວຍພຣະພອນຝ່າຍຈິດວິນຍານ (ອຟຊ. 1:3, 11).






## ໂຢຊວຍ ແລະ ວາລະສຸດທ້າຍ

ໂຢຊວຍເປັນສັນຍາລັກສີ່ເຖິງພຣະເຢຊູ, ໂຢຊວຍເປັນສັນຍາລັກສີ່ເຖິງຄວາມສຳເລັດ ຂອງຄຣິດຕະຈັກຂອງພຣະເຈົ້າອີກດ້ວຍ. ເພາະວ່າ ຄຣິດຕະຈັກກໍ່ເປັນຄືກັນກັບຮ່າງກາຍຂອງພຣະເຢຊູ.

ໂຢຊວຍປຽບເໝືອນສັນຍາລັກສຳລັບຄຣິດຕະຈັກ ແລະ ສະມາຊິກຂອງໂບດເປັນຄືກັນກັບພຣະກາຍຂອງພຣະເຢຊູຄຣິດ. ຄຣິດຕະຈັກຕໍ່ສູ້ກັບຄວາມຊົ່ວໃນສະໜາມຮົບທາງຈິດວິນຍານ. ຊີວິດຂອງໂຢຊວຍສະແດງໃຫ້ເຫັນເຖິງຄວາມຮັກຂອງພຣະເຈົ້າ ແລະ ກົດບັນຍັດຂອງພຣະອົງ.

ສຳລັບພວກເຮົາໃນມື້ນີ້, ພຣະຜູ້ຊ່ວຍໃຫ້ລອດທີ່ແທ້ຈິງໄດ້ມາແລ້ວໂລກໃບນີ້ ສະນັ້ນພວກເຮົາຈຶ່ງບໍ່ຈຳເປັນຕ້ອງໃຊ້ສັນຍາລັກຕ່າງໆ ວ່າພຣະຜູ້ຊ່ວຍໃຫ້ລອດແມ່ນໃຜ? ນັ້ນກໍ່ຄື ພຣະເຢຊູ

"ຄຣິດຕະຈັກຕ້ອງການຄົນທີ່ຄືກັນກັບ ກາເລັບ, ໂມເຊ ແລະ ໂຢຊວຍ. ເພາະຄວາມຈິງຮັກພັກດີ ແລະ ເຕັມໄປດ້ວຍຄວາມເຊື່ອ. ຄຣິດຕະຈັກຕ້ອງການຄົນທີ່ພ້ອມທີ່ຈະຮັບເອົາຊີວິດນິຣັນດອນ ແລະ ເຕັມໃຈທີ່ຈະເຊື່ອຟັງພຣະເຈົ້າ. ຄຣິດຕະຈັກຕ້ອງການຜູ້ຮັບໃຊ້ເຫລົ່ານີ້ຢ່າງຫລວງຫລາຍ ເພາະພວກເຂົາຕ້ອງໄດ້ແບ່ງປັນພຣະເຢຊູໃນທຸກທີ່ນແຫ່ງທົ່ວໂລກ."